*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 03, 157-163*
*https://doi.org/10.69692/SUJMRD1203157*

# A Study on the Status of English Language Teaching in Primary Schools Grades 3–5 in Luang Prabang Province

**Bounlam KHANTY[1], Kalaphath KOUNLAXAY, and Yang XANG**
*Department of Pencil of Promise, Faculty of Education, Souphanouvong University, Lao PDR*

[1]***Correspondence:*** *Bounlam KHANTY, Department of Pencil of Promise, Faculty of Education, Souphanouvong University. Tel: +856 20 98287624, E-mail: bounlam@pencilsofpromise.org*

**Article Info:**
**Submitted: March 18, 2026**
**Revised: July 20, 2026**
**Accepted: July 22, 2026**

**Abstract**

This study aimed to investigate the current state of English language teaching in grades 3 to 5 across 16 target primary schools (namely Long Lao, Nong Buakham, Som Sanouk, Hat Khang, Ban Khied, Ban Lee, Lak 50, Pha Luang, Souan Luang, Phou Dam, Kiew Khampom, Jung Oeuan, Bouam Phor, Na Khuen, Houay Hoiy, and Na Mueang) located in 6 target districts (Luang Prabang, Pak Ou, Nambak, Xiang Ngeun, Phoukhoun, and Nan) of Luang Prabang Province. The target group consisted of 41 English language teachers. The research instrument was a 15-item classroom observation checklist, and data collection was conducted by a team of 11 observation assistants. Data were analyzed using mean ($\bar{x}$) and standard deviation (S.D).

The findings revealed that the overall condition of English language teaching was at a moderate level ($\bar{X}$ = 2.45, S.D. = 0.44). In terms of strengths, the aspect with the highest mean score was mutual respect in the teaching and learning environment ($\bar{X}$ = 3.04, S.D. = 0.41), which was at a good level, followed by classroom management ($\bar{X}$ = 2.77, S.D. = 0.48).

Conversely, regarding areas for improvement, the lowest mean score was for lesson summarization ($\bar{X}$ = 1.70, S.D. = 0.87), which required development. Specifically, teachers needed to enhance their skills in assigning homework and organizing warm-up activities at the beginning of lessons. Furthermore, the findings indicate that although teachers demonstrated positive attitudes and built strong classroom relationships, they lacked specialized pedagogical techniques. Therefore, professional teacher development should be promoted through coaching and mentoring systems focusing on lesson introduction and effective summarization to ensure sustainability in primary English language education.

**Keywords**: English teaching, primary education, training

## 1. ພາກສະເໜີ

ການພັດທະນາຄຸນນະພາບການສຶກສາໃນສະຕະວັດທີ XXI ຮຽກຮ້ອງໃຫ້ມີການຍົກລະດັບສະມັດຕະພາບດ້ານວິຊາຊີບຄູຢ່າງຕໍ່ເນື່ອງ, ໂດຍສະເພາະແມ່ນທັກສະການສອນພາສາອັງກິດໃນຊັ້ນປະຖົມສຶກສາ ເຊິ່ງເປັນພື້ນຖານສຳຄັນຂອງການຮຽນຮູ້. ອີງຕາມທິດທາງການປະຕິຮູບການສຶກສາ, ການຫັນປ່ຽນບົດບາດຂອງຜູ້ສຶກສານິເທດ ຈາກການເຝິກອົບຮົມແບບລວມໆ ໄປສູ່ການສ້າງຂີດຄວາມສາມາດໃນການຄັດເລືອກ ແລະ ປະເມີນຊັບພະຍາກອນການຮຽນ-ການສອນ ຖືເປັນຍຸດທະສາດທີ່ສຳຄັນ (ພົມມະນີຈັນ ພ້ອມດ້ວຍຄະນະ, 2023). ວິທີການນີ້ມຸ່ງເນັ້ນການເສີມສ້າງຄວາມຮູ້ດ້ານເນື້ອໃນການສິດສອນ (Pedagogical Content Knowledge) ແລະ ການນຳໃຊ້ເຄື່ອງມື ICT ເພື່ອຫຼຸດຜ່ອນຊ່ອງຫວ່າງໃນການພັດທະນາວິຊາຊີບຄູ (Kounphilavong, 2020) ໄດ້ລະບຸວ່າ ຄູສອນພາສາອັງກິດໃນລາວສ່ວນໃຫຍ່ຍັງຂາດທັກສະດ້ານການອອກສຽງພະຍັນຊະນະ, ສະຫຼະ ແລະ ການປະສົມສຽງເພື່ອໃຫ້ກາຍເປັນຄຳເວົ້າທີ່ຖືກຕ້ອງຕາມຫຼັກໄວຍາກອນຂອງພາສານັ້ນໆ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງໃນລະດັບໂຮງຮຽນ ແລະ ກຸ່ມໂຮງຮຽນ, ການພັດທະນາສະມັດຕະພາບຂອງຜູ້ເຮັດວຽກສຶກສານິເທດດ້ານການສອນ ການຝຶກອົບຮົມໂດຍກົງ ໄປສູ່ ການສ້າງສະມັດຕະພາບ ແລະ ຂີດຄວາມສາມາດໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ໃນການກຳນົດ (ເລືອກ ແລະ ປະເມີນ) ຊັບພະຍາກອນການຮຽນການສອນເພື່ອການພັດທະນາວິຊາຊີບທີ່ກ່ຽວຂ້ອງ (ເອກະສານຫຼັກສູດ, ເຄື່ອງມື ICT ເພື່ອສະໜັບສະໜູນການພັດທະນາວິຊາຊີບ ແລະ ການຝຶກອົບຮົມ ໃຫ້ແກ່ ວິທະຍາໄລຄູ) ກະຊວງສຶກສາທິການ ແລະ ກິລາ, ກົມສາມັນສຶກສາ (2007) ເພື່ອເປັນການຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການທີ່ຮັບຮູ້ໄດ້ຂອງຄູສອນ. ວິທີການນີ້ ຈະຊ່ວຍເສີມສ້າງຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດກ່ຽວກັບຊັບພະຍາກອນທີ່ມີຢູ່ ສຳລັບການສະໜັບສະໜູນການພັດທະນາ ເນື້ອໃນຄວາມຮູ້ດ້ານການສິດສອນຂອງຄູ ແລະ ເພື່ອໃຫ້ສາມາດກຳນົດໄດ້ຊ່ອງຫວ່າງ ຂອງເນື້ອໃນການ ພັດທະນາ ວິຊາຊີບທີ່ກຳລັງມີການສະ ເໜີ (ເນື້ອໃນຂອງການຝຶກອົບຮົມ, ຊັບພະຍາກອນໃນການຮຽນຮູ້ດ້ວຍຕົນເອງ) ທີ່ກ່ຽວຂ້ອງ ກັບຄວາມຕ້ອງການສະເພາະຂອງຄູທີ່ສາມາດກຳນົດໄດ້ພາຍໃນການພັດທະນາວິຊາຊີບຄູ ແລະ ແຜນການໃນລະດັບ ໂຮງຮຽນ. ຜູ້

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ເຮັດວຽກສຶກສານິເທດທີ່ຖືກຄັດເລືອກຈະໄດ້ຮັບ “ຊຸດຊັບພະຍາກອນເພື່ອສະໜັບສະໜູນ ການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງ”. ພວກເຂົາເຈົ້າຈະສາມາດເລືອກ ແລະ ເຂົ້າເຖິງຊັບພະຍາກອນການພັດທະນາວິຊາຊີບໄດ້ ໂດຍ ອີງໃສ່ການວິເຄາະຄວາມຕ້ອງການໃນການພັດທະນາວິຊາຊີບ, ເຄື່ອງມືໃນການເຂົ້າເຖິງ ແລະ ການແລກປ່ຽນຊັບພະຍາກອນກັບໂຮງຮຽນ ແລະ ກຸ່ມໂຮງຮຽນ ລວມໄປເຖິງການປະສານງານກັບໂຮງຮຽນເຫຼົ່ານັ້ນ, ແລະ ຄວາມອາດ ສາມາດໃນການຝຶກສອນກຸ່ມໂຮງຮຽນ/ຄູ ແລະ ຜູ້ອຳນວຍການເພື່ອດຳເນີນການຝຶກອົບຮົມວິຊາຊີບດ້ວຍຕົນ ເອງ /ພາຍໃນໂຮງຮຽນ ແລະ ກຸ່ມໂຮງຮຽນ. ເຂົາເຈົ້າຍັງຈະສາມາດແຈ້ງໃຫ້ ວິທະຍາໄລຄູ/ສູນພັດທະນາຄູ ຮັບຊາບກ່ຽວກັບຂົງເຂດທີ່ຈຳເປັນຕ້ອງໄດ້ມີການພັດທະນາວິຊາຊີບ ເພື່ອຮັບປະກັນວ່າວິທີການໃນການຝຶກອົບຮົມຄູ ແລະ ການ ພັດທະນາວິຊາຊີບຈະກົງກັບຄວາມຕ້ອງການຕົວຈິງ ແລະ ມີຄວາມຄຸ້ມຄ່າ. (ກະຊວງສຶກສາທິການ ແລະ ກິລາ, 2020 ກ).

ໃນບໍລິບົດຂອງແຂວງຫຼວງພະບາງ, ມູນນິທິສໍແຫ່ງຄວາມຫວັງ ໃນນາມອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGO) ໄດ້ມີບົດບາດສຳຄັນໃນການຮ່ວມມືກັບພະແນກສຶກສາທິການ ແລະ ກິລາແຂວງ ມາແຕ່ປີ 2013 ເພື່ອພັດທະນາພື້ນຖານໂຄງລ່າງ ແລະ ຄຸນນະພາບການສຶກສາຢ່າງເປັນລະບົບ. ນອກຈາກການກໍ່ສ້າງອາຄານຮຽນ ແລະ ການສະໜອງອຸປະກອນການຮຽນ-ການສອນແລ້ວ, ມູນນິທິໄດ້ໃຫ້ຄວາມສຳຄັນຢ່າງຍິ່ງຕໍ່ "ກິດຈະກຳສະໜັບສະໜູນຄູພາສາອັງກິດຊັ້ນປະຖົມສຶກສາ" ເພື່ອຮັບປະກັນໃຫ້ຄູສອນສາມາດເຂົ້າເຖິງຊຸດຊັບພະຍາກອນການຮຽນຮູ້ ແລະ ໄດ້ຮັບການຝຶກສອນ ຢ່າງມີປະສິດທິພາບ (ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ, 2023). ກິດຈະກຳດັ່ງກ່າວບໍ່ໄດ້ເນັ້ນພຽງແຕ່ການຖ່າຍທອດຄວາມຮູ້ທາງດ້ານທິດສະດີເທົ່ານັ້ນ, ແຕ່ຍັງລວມເຖິງການລົງຕິດຕາມຊ່ວຍເຫຼືອຄູຢູ່ໜ້າວຽກຕົວຈິງພາຍໃນຫ້ອງຮຽນ ເພື່ອປັບປຸງເຕັກນິກການສອນໃຫ້ມີຄວາມທັນສະໄໝ ແລະ ສອດຄ່ອງກັບຈິດຕະວິທະຍາການຮຽນຮູ້ຂອງເດັກໃນໄວປະຖົມສຶກສາ.ນອກຈາກສິ່ງທ້າທາຍດ້ານຊັບພະຍາກອນແລ້ວ, ປັດໄຈດ້ານບຸກຄະລາກອນກໍເປັນສິ່ງສຳຄັນທີ່ສົ່ງຜົນຕໍ່ຄຸນນະພາບການສຶກສາ. ດັ່ງທີ່ ກະຊວງສຶກສາທິການ ແລະ ກິລາ (2020 ຂ) ທີ່ລະບຸວ່າ ຄູສອນພາສາອັງກິດໃນຊັ້ນປະຖົມສຶກສາມີທັດສະນະຄະຕິທີ່ດີ ແລະ ມີຄວາມກະຕືລືລົ້ນຕໍ່ກັບການຈັດການຮຽນ-ການສອນ, ແຕ່ເຖິງຢ່າງໃດກໍຕາມ ຂໍ້ຈຳກັດດ້ານຄວາມສາມາດທາງດ້ານພາສາ (Language Proficiency) ແລະ ເຕັກນິກການສິດສອນ (Pedagogical Skills) ທີ່ຍັງບໍ່ທັນຫຼາກຫຼາຍ. ສິ່ງນີ້ຊີ້ໃຫ້ເຫັນວ່າການສະໜັບສະໜູນພຽງແຕ່ດ້ານວັດຖຸອຸປະກອນອາດຈະບໍ່ພຽງພໍ, ແຕ່ຈຳເປັນຕ້ອງມີການຍົກລະດັບສະມັດຕະພາບດ້ານເຕັກນິກວິທີການສອນຢ່າງເປັນລະບົບ ໂດຍສະເພາະແມ່ນການນິເທດ ແລະ ການຝຶກສອນຢ່າງໃກ້ຊິດ ເພື່ອປ່ຽນຄວາມຕັ້ງໃຈທີ່ດີຂອງຄູ ໃຫ້ກາຍເປັນຜົນສຳເລັດໃນການຮຽນຮູ້ຂອງນັກຮຽນຢ່າງແທ້ຈິງ.

ຂະບວນການສະໜັບສະໜູນນີ້ໄດ້ຫັນປ່ຽນຈາກຮູບແບບການຝຶກອົບຮົມແບບດັ້ງເດີມ ໄປສູ່ການສ້າງ "ຊຸມຊົນແຫ່ງການຮຽນຮູ້ທາງວິຊາຊີບ" ການພັດທະນາຄູຜ່ານລະບົບການຝຶກສອນ ຫຼື ຝຶກອົບຮົມ (Coaching) ຕາມແນວຄິດຂອງ (Knight, 2022)ແມ່ນການສ້າງສາຍສຳພັນແບບຄູ່ຮ່ວມງານລະຫວ່າງຜູ້ຊ່ວຍສັງເກດ ແລະ ຄູສອນ ເພື່ອວິເຄາະບັນຫາ ແລະ ວາງແຜນປັບປຸງເຕັກນິກການສອນຢູ່ໜ້າວຽກຕົວຈິງຢ່າງເປັນລະບົບ ເຊິ່ງຊ່ວຍໃຫ້ຄູສອນມີໂອກາດແລກປ່ຽນບົດຮຽນ, ຮ່ວມກັນແກ້ໄຂບັນຫາການສອນ ແລະ ນຳໃຊ້ສື່ການສອນທີ່ໂຄງການສະໜອງໃຫ້ຢ່າງຄຸ້ມຄ່າ.ໃນບໍລິບົດການສອນພາສາອັງກິດຊັ້ນປະຖົມສຶກສາ, Shin & Crandall (2021) ໄດ້ເນັ້ນໜັກວ່າ ຄູຄວນນຳໃຊ້ກິດຈະກຳທີ່ເນັ້ນການມີສ່ວນຮ່ວມ ແລະ ການສ້າງແຮງຈູງໃຈ ເພື່ອໃຫ້ເດັກເກີດຄວາມຄຸ້ນເຄີຍກັບພາສາໃນສະພາບແວດລ້ອມທີ່ບໍ່ກົດດັນ. ການນຳໃຊ້ "ຊຸດຊັບພະຍາກອນເພື່ອສະໜັບສະໜູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ" ທີ່ເນັ້ນໜັກໃສ່ການສອນພາສາອັງກິດຜ່ານກິດຈະກຳ (Active Learning) ໄດ້ຊ່ວຍໃຫ້ຄູມີຄວາມໝັ້ນໃຈໃນການສື່ສານ ແລະ ສາມາດຈັດກິດຈະກຳທີ່ກະຕຸ້ນໃຫ້ນັກຮຽນມີສ່ວນຮ່ວມຢ່າງຫ້າວຫັນ ນອກຈາກນີ້, Sitthixay (2021) ຍັງໄດ້ເນັ້ນວ່າການນິເທດທີ່ມີປະສິດທິພາບຄວນເນັ້ນການນຳໃຊ້ສື່ການສອນ ແລະ ເຕັກໂນໂລຊີ ເຂົ້າມາຊ່ວຍ ເພື່ອເຮັດໃຫ້ການຮຽນ-ການສອນພາສາອັງກິດມີຄວາມໜ້າສົນໃຈຫຼາຍຂຶ້ນ. ດັ່ງນັ້ນ, ການສຶກສາສະພາບການສອນພາສາອັງກິດຈຶ່ງເປັນສິ່ງຈຳເປັນເພື່ອຊອກຫາຮູບແບບການຊ່ວຍເຫຼືອຄູໃຫ້ສາມາດສອນພາສາອັງກິດ ປ.3-ປ.5 ໃຫ້ມີຄຸນນະພາບ (Vongxay, 2024) ໄດ້ສະເໜີວ່າ ການສ້າງເຄືອຂ່າຍການຮຽນຮູ້ທາງວິຊາຊີບ (PLC) ລະຫວ່າງຄູສອນພາສາອັງກິດໃນກຸ່ມໂຮງຮຽນ ອາດເປັນທາງອອກທີ່ຍືນຍົງສຳລັບການນິເທດໃນ ສປປ ລາວ. ຜົນຈາກການຮ່ວມມືດັ່ງກ່າວ ບໍ່ພຽງແຕ່ຍົກລະດັບຂີດຄວາມສາມາດຂອງຄູສອນເທົ່ານັ້ນ, ແຕ່ຍັງເປັນການວາງຮາກຖານອັນເຂັ້ມແຂງໃຫ້ແກ່ການພັດທະນາການສຶກສາພາຍໃນແຂວງຫຼວງພະບາງ ໃຫ້ມີຄວາມຍືນຍົງ ແລະ ສອດຄ່ອງກັບມາດຕະຖານການສຶກສາແຫ່ງຊາດ (ອົງການສໍແຫ່ງຄວາມຫວັງ, 2024) ມູນນິທິໄດ້ໃຫ້ຄວາມສຳຄັນຢ່າງຍິ່ງຕໍ່ 'ກິດຈະກຳສະໜັບສະໜູນຄູພາສາອັງກິດ ຊັ້ນປະຖົມສຶກສາ' Hongsaxard (2010) ເພື່ອຮັບປະກັນໃຫ້ຄູສອນສາມາດເຂົ້າເຖິງຊຸດຊັບພະຍາກອນການຮຽນຮູ້ ແລະ ໄດ້ຮັບການຝຶກສອນ (Coaching) ຢ່າງມີປະສິດທິພາບ. ວິທີການດັ່ງກ່າວສອດຄ່ອງກັບແນວຄິດຂອງ (Darling-Hammond et al., 2017) ທີ່ສະເໜີວ່າ ການພັດທະນາວິຊາຊີບຄູທີ່ມີປະສິດທິຜົນຕ້ອງເນັ້ນໃສ່ການຮຽນຮູ້ຜ່ານການປະຕິບັດຕົວຈິງ, ມີການຮ່ວມມືກັນພາຍໃນອົງກອນ ແລະ ມີການຊີ້ແນະ, ແນະນຳ ຈາກຜູ້ຊ່ຽວຊານຢ່າງຕໍ່ເນື່ອງ ເພື່ອໃຫ້ເກີດການປ່ຽນແປງໃນພຶດຕິກຳການສອນຕົວຈິງ

ເຖິງຢ່າງໃດກໍຕາມ, ການທີ່ຈະພັດທະນາການຮຽນ-ການສອນພາສາອັງກິດ ໃນຊັ້ນປະຖົມສຶກສາ (ປ.3-ປ.5) ໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບສະພາບຄວາມເປັນຈິງນັ້ນ, ການສຶກສາ ແລະ ປະເມີນສະພາບການສອນໃນຫ້ອງຮຽນຕົວຈິງ ພາຍໃນແຂວງຫຼວງພະບາງຈຶ່ງມີຄວາມຈຳເປັນຢ່າງຍິ່ງ. ເນື່ອງຈາກໃນປັດຈຸບັນ, ການຈັດການຮຽນ-ການສອນພາສາອັງກິດໃນພື້ນທີ່ດັ່ງກ່າວ ຍັງມີຄວາມທ້າທາຍທັງໃນດ້ານການຈັດການຫ້ອງຮຽນ, ການນຳໃຊ້ສື່ ແລະ ການຜັນຂະຫຍາຍຄູ່ມືຄູ. ດັ່ງນັ້ນ, ການວິໄຈຄັ້ງນີ້ຈຶ່ງມຸ່ງເນັ້ນສຶກສາສະພາບການສອນໃນດ້ານຕ່າງໆ ເພື່ອໃຫ້ໄດ້ຂໍ້ມູນຍັ້ງຢືນ ທີ່ເປັນຈິງ ເຊິ່ງຈະຊ່ວຍໃຫ້ຜູ້ສຶກສາ

ນິເທດ ແລະ ວິທະຍາໄລຄູ ສາມາດນຳໄປໃຊ້ເປັນບ່ອນອີງສຳຄັນ ໃນການກຳນົດຂົງເຂດການພັດທະນາສັກກະຍະພາບຂອງຄູ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ບໍລິບົດຕົວຈິງຂອງແຂວງຫຼວງພະບາງ ໄດ້ຢ່າງກົງຈຸດ ແລະ ມີປະສິດທິຜົນ.

ຈາກເຫດຜົນທີ່ກ່າວມາຂ້າງເທິງ, ທາງຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈ: ສຶກສາສະພາບການສອນພາສາອັງກິດ ຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ໃນໂຮງຮຽນເປົ້າໝາຍທີ່ແຂວງຫຼວງພະບາງ. ຜົນການຄົ້ນຄວ້າໃນຄັ້ງນີ້ ບໍ່ພຽງແຕ່ຈະສະທ້ອນໃຫ້ເຫັນເຖິງຜົນສຳເລັດ ແລະ ສິ່ງທ້າທາຍໃນການສິດສອນຕົວຈິງເທົ່ານັ້ນ, ແຕ່ຍັງເປັນຂໍ້ມູນພື້ນຖານທີ່ສຳຄັນໃນການວາງແຜນພັດທະນາສະມັດຕະພາບຂອງຜູ້ສຶກສານິເທດ ແລະ ຄູສອນ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງໃນອະນາຄົດ

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍ ທີ່ເອົາມາສຶກສາຄົ້ນຄ້ວາຄັ້ງນີ້ແມ່ນຄູສອນພາສາອັງກິດໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ທີ່ແຂວງຫລວງພະບາງໃນຄັ້ງນີ້ ກຸ່ມຄູເປົ້າໝາຍທີ່ຜ່ານການຝຶກອົບຮົມພາສາອັງກິດໃນຊັ້ນປະຖົມສຶກສາ 6 ເມືອງເປົ້າໝາຍ 1. ນະຄອນຫຼວງພະບາງ ຈຳນວນ 5 ທ່ານ, ເມືອງປາກອູ ຈຳນວນ 8 ທ່ານ, ເມືອງນ້ຳບາກ ຈຳນວນ 8 ທ່ານ, ເມືອງຊຽງເງິນ ຈຳນວນ 7 ທ່ານ, ເມືອງນານ ຈຳນວນ 8 ທ່ານ ແລະ ເມືອງຄູນ ຈຳນວນ 5 ທ່ານ. ໃນນີ້ລວມມີຄູທັງໝົດ 41 ທ່ານ, ຍິງ 24 ທ່ານ. ຄູປະຈຳການສອນ ຂັ້ນ ປໍ3 ມີ 16 ທ່ານ, , ຂັ້ນ ປໍ4 ມີ 12ທ່ານ, ແລະ ຂັ້ນ ປໍ5 ມີ 13 ທ່ານ

### 2.2 ເຄື່ອງມືທີ່ໃຊ້ການຄົ້ນຄວ້າ

ເຄື່ອງມືທີ່ຜູ້ຄົ້ນຄ້ວາໃຊ້ໃນການຄົ້ນຄ້ວາ ຈາກກຸ່ມເປົ້າໝາຍໃນການເກັບກຳ ແລະ ລວບລວມຂໍ້ມູນ ເປັນແບບສັງເກດການສອນ ທີ່ໃຊ້ສັງລວມຂໍ້ມູນ ຄູສອນພາສາອັງກິດ ໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ທີ່ ແຂວງຫລວງພະບາງ ຢູ່ໃນເມືອງ ແລະ ໂຮງຮຽນເປົ້າໝາຍຂອງໂຄງການສໍແຫ່ງຄວາມຫວັງ ຈຳນວນ 16 ແຫ່ງຄື: ປສ ລ້ອງເລົາ, ປສ ໜອງບົວຄຳ, ປສ ສົມສະນຸກ, ປສ ບ້ານກຽດ, ປສ ຫາດຄັ່ງ, ປສ ຜາຫຼວງ, ປສ ຫຼັກ50, ປສ ບ້ານລີ, ປສ ສອນຫຼວງ, ປສ ພູດຳ, ປສ ກົ້ວຂາມປອມ, ປສ ນາເຄີນ, ປສ ນາເມືອງ, ປສ ຫ້ວຍຫອຍ, ປສ ຈັງເອື່ອນ, ປສ ບວມພໍ. ເຊິ່ງມີຂັ້ນຕອນລາຍລະອຽດດັ່ງນີ້:

- ເຄື່ອງມືຫຼັກທີ່ໃຊ້ໃນການເກັບກຳຂໍ້ມູນຄັ້ງນີ້ແມ່ນ ແບບສັງເກດການສອນ (Observation Checklist) ທີ່ສ້າງຂຶ້ນໂດຍອີງໃສ່ເນື້ອໃນການພັດທະນາວິຊາຊີບຄູຂອງມູນນິທິສໍແຫ່ງຄວາມຫວັງ, ລັກສະນະຂອງເຄື່ອງມືແມ່ນແບບມາດຕາສ່ວນປະມານຄ່າ (Rating Scale) 4 ລະດັບ ຕາມຮູບແບບຂອງ Chomeya (2010) ໂດຍມີເກນໃຫ້ຄະແນນ ດັ່ງນີ້:

ລະດັບຄະແນນ 4 ໝາຍເຖິງ ດີຫຼາຍ
ລະດັບຄະແນນ 3 ໝາຍເຖິງ ດີ
ລະດັບຄະແນນ 2 ໝາຍເຖິງ ປານກາງ
ລະດັບຄະແນນ 1 ໝາຍເຖິງ ປັບປຸງ

- ແບບສັງເກດການສອນເຊິ່ງປະກອບມີ 28 ຂໍ້ຄຳຖາມ, ແບ່ງອອກເປັນ 7 ດ້ານຫຼັກ ຄື:

1) ຂັ້ນການເລີ່ມຕົ້ນ (4 ຂໍ້)
2) ການເຄົາລົບກັນໃນສະພາບແວດລ້ອມການຮຽນ-ການສອນ (5 ຂໍ້)
3) ວິທີການຈັດການຫ້ອງຮຽນ (4 ຂໍ້)
4) ຂັ້ນການສະຫຼຸບບົດຮຽນ (2 ຂໍ້)
5) ການຈັດຫ້ອງຮຽນ ແລະ ອຸປະກອນ (4 ຂໍ້)
6) ການນຳໃຊ້ຄຳຖາມ ແລະ ການສົນທະນາ (4 ຂໍ້)
7) ການປະເມີນຄວາມເຂົ້າໃຈ ແລະ ການຊ່ວຍເຫຼືອນັກຮຽນ (5 ຂໍ້)

- ແຕ່ເພື່ອໃຫ້ສອດຄ່ອງກັບຈຸດປະສົງຂອງບົດຄວາມທີ່ມຸ່ງເນັ້ນສຶກສາ "ສະພາບການຈັດການຮຽນ-ການສອນພາສາອັງກິດໃນຫ້ອງຮຽນ", ຜູ້ຄົ້ນຄວ້າຈຶ່ງໄດ້ຄັດເລືອກເອົາ 4 ດ້ານຫຼັກ ທີ່ເປັນຕົວຊີ້ວັດໂດຍກົງຕໍ່ຂະບວນການສິດສອນ ຈຳນວນ 15 ຂໍ້ຄຳຖາມ ດັ່ງນີ້:

1) ຂັ້ນການເລີ່ມຕົ້ນ (ຈຳນວນ 4 ຂໍ້)
2) ການເຄົາລົບກັນໃນສະພາບແວດລ້ອມການຮຽນ-ການສອນ (ຈຳນວນ 5 ຂໍ້)
3) ວິທີການຈັດການຫ້ອງຮຽນ (ຈຳນວນ 4 ຂໍ້)
4) ຂັ້ນການສະຫຼຸບບົດຮຽນ (ຈຳນວນ 2 ຂໍ້)

- ການຫາຄຸນນະພາບຂອງເຄື່ອງມື

ຫຼັງຈາກສ້າງເຄື່ອງມືສຳເລັດແລ້ວໄດ້ນຳໄປສະເໜີຕໍ່ຜູ້ຊ່ຽວຊານ 3 ທ່ານ ເພື່ອກວດສອບຫາຄວາມສອດຄ່ອງຂອງເຄື່ອງມື (IOC: Index of Item-Objective Congruence) ແລະ ຄວາມເໝາະສົມຂອງເນື້ອໃນຂອງແບບສອບຖາມໂດຍຄັດເລືອກເອົາຂໍ້ທີ່ມີຄ່າ IOC ຢູ່ໃນລະດັບ 0.50 ຂຶ້ນໄປ ເຊິ່ງຜົນການກວດສອບມີຄ່າສະເລ່ຍໂດຍລວມເທົ່າກັບ 0.97 ແລະ ແຕ່ລະຂໍ້ແມ່ນຢູ່ໃນຫວ່າງ 0.66-1.00 ຖືວ່ານຳໃຊ້ໄດ້. ຫຼັງຈາກນັ້ນໄດ້ນຳໄປທົດລອງໃຊ້ ໂດຍນຳແບບສອບຖາມທີ່ປັບປຸງແລ້ວໄປທົດລອງໃຊ້ກັບກຸ່ມທີ່ມີລັກສະນະໃກ້ຄຽງ (ບໍ່ແມ່ນກຸ່ມຕົວຢ່າງ) ຈຳນວນ 12 ຄົນທີ່ຢູ່ເຂດໃກ້ຄຽງທີ່ບໍ່ນອນໃນກຸ່ມຕົວຢ່າງສະດວກໃນການເກັບກຳຂໍ້ມູນ, ແລ້ວນຳມາຄິດໄລ່ຫາຄວາມເຊື່ອໝັ້ນ ຕາມສູດສຳປະສິດອັນຟາຂອງຄຣອນບັກ (Cronbach's Alpha Coefficient) ເຊິ່ງມີຄ່າເທົ່າ 0.91 ຈາກນັ້ນປັບປຸງເຄື່ອງມືໃຫ້ມີຄວາມສົມບູນ ເພື່ອນຳໄປເກັບລວບລວມຂໍ້ມູນຕົວຈິງ.

### 2.3 ການເກັບກຳຮວບຮວມຂໍ້ມູນ

ການເກັບກຳຂໍ້ມູນໃນຄັ້ງນີ້ ຜູ້ວິໄຈລົງພື້ນທີ່ຕົວຈິງໂດຍຕົວເອງໂດຍ

ຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳຂໍ້ມູນຢ່າງເປັນລະບົບ ໂດຍມີຂັ້ນຕອນລະອຽດດັ່ງນີ້:

- ຜູ້ຄົ້ນຄວ້າໄດ້ຂໍຄວາມຊ່ວຍເຫຼືອຈາກທີມງານຜູ້ຊ່ວຍສັງເກດການສອນທັງໝົດ 11 ທ່ານ, ເຊິ່ງປະກອບມີ ບຸກຄະລາກອນສຶກສານິເທດ, ຄູຝຶກປະຈຳເມືອງ ແລະ ວິຊາການຈາກມູນນິທິສໍແຫ່ງຄວາມຫວັງ. ທີມງານທັງໝົດໄດ້ຜ່ານການເຝິກອົບຮົມເພື່ອສ້າງຄວາມເຂົ້າໃຈກ່ຽວກັບຈຸດປະສົງ, ຂັ້ນຕອນການສັງເກດ ແລະ ເກນການໃຫ້ຄະແນນໃນແບບສັງເກດການສອນ ເພື່ອໃຫ້ເກີດຄວາມເປັນເອກະພາບ ແລະ ມີຄວາມທ່ຽງຕົງໃນການປະເມີນ .

- ທີມງານຜູ້ຊ່ວຍສັງເກດການ ໄດ້ຖືກແບ່ງອອກເປັນກຸ່ມຮັບຜິດຊອບຕາມແຕ່ລະເຂດ ແລະ ລະດັບຊັ້ນຮຽນ (ປ.3-ປ.5) ໃນ

ໂຮງຮຽນເປົ້າໝາຍທີ່ກຳນົດໄວ້. ເຖິງວ່າຈະມີການແບ່ງກຸ່ມລົງພື້ນທີ່, ແຕ່ທຸກທ່ານແມ່ນນຳໃຊ້ ແບບສັງເກດການສອນຊຸດດຽວກັນ ເພື່ອຮັບປະກັນວ່າຂໍ້ມູນທີ່ໄດ້ມານັ້ນສາມາດນຳມາປຽບທຽບ ແລະ ວິເຄາະໃນມາດຕະຖານດຽວກັນໄດ້.

- ການລົງສັງເກດການສອນຕົວຈິງ ແມ່ນຜູ້ຄົ້ນຄວ້າ ແລະ ທີມງານໄດ້ລົງພື້ນທີ່ເກັບກຳຂໍ້ມູນໃນໄລຍະ ເດືອນ10 ປີ 2026. ການສັງເກດແມ່ນເນັ້ນໃສ່ການຈັດກິດຈະກຳໃນຫ້ອງຮຽນຕົວຈິງ ໂດຍທີ່ຜູ້ສັງເກດຈະບັນທຶກພຶດຕິກຳການສອນຂອງຄູ ແລະ ການມີສ່ວນຮ່ວມຂອງນັກຮຽນຕາມລາຍການສັງເກດທີ່ກຳນົດໄວ້ໃນແບບສັງເກດການສອນ.

- ພາຍຫຼັງສິ້ນສຸດການລົງສະໜາມຕິດຕາມການສັງເກດການສອນຕົວຈິງແລ້ວ, ຜູ້ຄົ້ນຄວ້າໄດ້ຮວບຮວມແບບສັງເກດການສອນທັງໝົດ 41 ສະບັບ ຈາກທີມງານຜູ້ຊ່ວຍສັງເກດ. ຈາກນັ້ນ, ໄດ້ດຳເນີນການກວດສອບຄວາມສົມບູນ ແລະ ຄວາມຖືກຕ້ອງຂອງຂໍ້ມູນ ກ່ອນຈະນຳໄປປະມວນຜົນດ້ວຍໂປຣແກຼມສະຖິຕິເພື່ອຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຕໍ່ໄປ.

2.4 ການວິເຄາະຂໍ້ມູນ

ໃນການຄົ້ນຄວ້າຄັ້ງນີ້, ຜູ້ຄົ້ນຄວ້າໄດ້ນຳເອົາຂໍ້ມູນທີ່ເກັບກຳໄດ້ຈາກແບບສັງເກດການສອນທັງໝົດ 41 ສະບັບ ມາປະມວນຜົນ ແລະ ວິເຄາະດ້ວຍໂປຣແກຣມສະຖິຕິສຳເລັດຮູບ SPSS ໂດຍນຳໃຊ້ສະຖິຕິ ແລະ ເກນການວິເຄາະດັ່ງນີ້:

1. ສະຖິຕິທີ່ນຳໃຊ້:ສະຖິຕິພັນລະນາ (Descriptive Statistics): ນຳໃຊ້ຄ່າສະເລ່ຍ ($\overline{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ເພື່ອວິເຄາະລະດັບສະພາບການສອນພາສາອັງກິດຂອງຄູໃນແຕ່ລະດ້ານ ແລະ ພາບລວມທັງ 4 ດ້ານ.

2. ຜູ້ຄົ້ນຄວ້າໄດ້ກຳນົດເກນການແປຄວາມໝາຍຂອງຄ່າສະເລ່ຍ ($\overline{X}$) ໂດຍໄດ້ແບ່ງອອກເປັນ 4 ລະດັບ ດັ່ງນີ້:

ຄະແນນສະເລ່ຍລະຫວ່າງ 3.26 – 4.00 ໝາຍເຖິງ ປະຕິບັດໄດ້ດີຫຼາຍ

ຄະແນນສະເລ່ຍລະຫວ່າງ 2.51 – 3.25 ໝາຍເຖິງ ປະຕິບັດໄດ້ດີ

ຄະແນນສະເລ່ຍລະຫວ່າງ 1.76 – 2.50 ໝາຍເຖິງ ປະຕິບັດໄດ້ປານກາງ

ຄະແນນສະເລ່ຍລະຫວ່າງ 1.00 – 1.75 ໝາຍເຖິງ ປະຕິບັດໄດ້ໜ້ອຍ (ປັບປຸງ)

## 3. ຜົນໄດ້ຮັບ

3.1 ສະພາບການສອນພາສາອັງກິດຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ 3-ປໍ5

ຈາກຜົນການຄົ້ນຄວ້າເຫັນໄດ້ວ່າ ສະພາບການສອນພາສາອັງກິດຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ໂດຍລວມແລ້ວແມ່ນຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ $\overline{X}$ = 2.45, SD = 0.44 ເມື່ອພິຈາລະນາເປັນແຕ່ລະດ້ານແລ້ວເຫັນວ່າ ດ້ານທີ່ຄູສອນເຮັດໄດ້ດີມີຄ່າສະເລ່ຍສູງສຸດແມ່ນ ການເຄົາລົບກັນໃນສະພາບແວດລ້ອມການຮຽນການສອນໃນຫ້ອງຮຽນ ມີຄ່າສະເລ່ຍ $\overline{X}$ = 3.04, SD = 0.41, ຮອງລົງມາແມ່ນ ດ້ານວິທີການຈັດການຫ້ອງຮຽນ ມີຄ່າສະເລ່ຍ $\overline{X}$ =2.77, SD =0.48, ການເລີ່ມຕົ້ນ ມີຄ່າສະເລ່ຍ $\overline{X}$ =2.31, SD =0.59 ແລະ ດ້ານຄູສອນເຮັດບໍ່ທັນໄດ້ຕ້ອງໄດ້ປັບປຸງ ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ການສະຫຼຸບບົດຮຽນ ມີຄ່າສະເລ່ຍ $\overline{X}$ = 1.70, SD = 0.87. ເຊິ່ງສາມາດວິເຄາະແຕ່ລະດ້ານດັ່ງນີ້:

1) ດ້ານຂັ້ນການເລີ່ມຕົ້ນ ໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $\overline{X}$ = 2.31, SD = 0.51 ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວເຫັນວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ການທັກທາຍ ມີຄ່າສະເລ່ຍ $\overline{X}$ = 2.80, SD = 0.81; ຮອງລົງມາແມ່ນ ການສອນບົດຮຽນໃໝ່ ມີຄ່າສະເລ່ຍ $\overline{X}$ = 2.61, SD = 0.77, ການທວນຄືນບົດຮຽນເກົ່າ ມີຄ່າສະເລ່ຍ $\overline{X}$ = 2.05, SD = 0.94, ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ການອອກກຳລັງ ກາຍ ຫຼື ກິດຈະກຳ ສ້າງບັນຍາກາດ ມີຄ່າສະເລ່ຍ $\overline{X}$ = 1.78, SD = 1.15. (ຕາຕະລາງທີ 1)

2) ການເຄົາລົບກັນໃນສະພາບແວດລ້ອມການຮຽນການສອນໃນຫ້ອງຮຽນໂດຍລວມແລ້ວແມ່ນຢູ່ໃນລະດັບ ດີ ເຊິ່ງມີຄ່າສະເລ່ຍ $\overline{X}$ = 3.04, SD = 0.41 ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວເຫັນວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ການແກ້ໄຂຂໍ້ຂັດ ແຍ້ງ ມີຄ່າສະເລ່ຍ $\overline{X}$ = 3.27, SD = 0.80; ຮອງລົງມາແມ່ນ ການສື່ສານຂອງ ຄູຕໍ່ກັບນັກຮຽນໃນຫ້ອງຮຽນ ມີຄ່າສະເລ່ຍ $\overline{X}$ =3.24, SD = 0.53, ການມີສ່ວນຮ່ວມ ຂອງນັກຮຽນ ມີຄ່າສະເລ່ຍ $\overline{X}$ = 3.07, SD = 0.56 ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ການກະຕຸ້ນ ແລະ ໃຫ້ກຳລັງໃຈ ມີຄ່າສະເລ່ຍ $\overline{X}$ = 2.71, SD = 0.68. (ຕາຕະລາງທີ 2)

3) ດ້ານວິທີການຈັດການຫ້ອງຮຽນ ໂດຍລວມແລ້ວແມ່ນຢູ່ໃນລະດັບ ດີ ເຊິ່ງມີຄ່າສະເລ່ຍ $\overline{X}$ = 2.77, SD = 0.48 ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວເຫັນວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ການບໍລິຫານ ເວລາ ມີຄ່າສະເລ່ຍ $\overline{X}$ = 3.02, SD = 0.65; ຮອງລົງມາແມ່ນ ການອະທິບາຍ ມີຄ່າສະເລ່ຍ $\overline{X}$ =2.80, SD = 0.51, ການນຳໃຊ້ກິດຈະກຳເຂົ້າໃນການສອນມີຄ່າສະເລ່ຍ $\overline{X}$ = 2.68, SD = 0.65 ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ການເຊື່ອມຕໍ່ລະຫວ່າງຫົວຂໍ້ຂອງບົດຮຽນ ມີຄ່າສະເລ່ຍ $\overline{X}$ = 2.59, SD = 0.63. (ຕາຕະລາງທີ 3)

4) ດ້ານການສະຫຼຸບບົດຮຽນ ໂດຍລວມແລ້ວແມ່ນຢູ່ໃນລະດັບປັບປຸງ ເຊິ່ງມີຄ່າສະເລ່ຍ $\overline{X}$ = 1.70, SD = 0.87 ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວເຫັນວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ການສະຫຼຸບບົດຮຽນ ມີຄ່າສະເລ່ຍ $\overline{X}$ = 1.88, SD = 1.07 ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ການມອບວຽກບ້ານ ມີຄ່າສະເລ່ຍ $\overline{X}$ = 1.54, SD = 0.84.(ຕາຕະລາງທີ 4)

## 4. ວິພາກຜົນ

ຈາກຜົນການຄົ້ນຄວ້າສະພາບການສອນພາສາອັງກິດຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ຢູ່ແຂວງຫຼວງພະບາງ ພົບປະເດັນທີ່ສຳຄັນທີ່ຄວນນຳມາອະພິປາຍດັ່ງນີ້:

ຜົນການຄົ້ນຄວ້າພົບວ່າ ດ້ານການເຄົາລົບກັນໃນສະພາບແວດລ້ອມການຮຽນ-ການສອນ ມີຄ່າສະເລ່ຍສູງສຸດ ຢູ່ໃນລະດັບ "ດີ". ສິ່ງນີ້ສະທ້ອນໃຫ້ເຫັນວ່າ ຄູສອນພາສາອັງກິດມີທັດສະນະຄະຕິທີ່ດີ ແລະ

ສາມາດສ້າງບັນຍາກາດທີ່ປອດໄພໃຫ້ແກ່ນັກຮຽນ. ເຊິ່ງສອດຄ່ອງກັບການລາຍງານຂອງ ກະຊວງສຶກສາທິການ ແລະ ກິລາ (2020 ຂ) ທີ່ຢັ້ງຢືນວ່າ ຄູສອນປະຖົມມີຄວາມພໍໃຈ ແລະ ມີທັດສະນະຄະຕິທາງບວກຕໍ່ວິຊາຊີບ. ນອກຈາກນີ້, ດ້ານການບໍລິຫານເວລາໃນຫ້ອງຮຽນທີ່ເຮັດໄດ້ດີ ຍັງສະແດງເຖິງຄວາມເອົາໃຈໃສ່ຂອງຄູຕໍ່ກັບຕາຕະລາງການຮຽນ. ສິ່ງເຫຼົ່ານີ້ຖືເປັນພື້ນຖານສຳຄັນຕາມແນວຄິດຂອງ Darling-Hammond et al. (2017) ທີ່ລະບຸວ່າ ສະພາບແວດລ້ອມທີ່ເອື້ອອຳນວຍເປັນປັດໄຈເບື້ອງຕົ້ນທີ່ຊ່ວຍໃຫ້ການພັດທະນາວິຊາຊີບຄູເກີດປະສິດທິຜົນ. ແຕ່ເຖິງຢ່າງໃດກໍ່ພົບຂໍ້ຈຳກັດດ້ານເຕັກນິກການສອນ ແລະ ການສ້າງບັນຍາກາດຢູ່ ເຖິງວ່າຄູຈະມີສາຍສຳພັນທີ່ດີ, ແຕ່ໃນ ຂັ້ນການເລີ່ມຕົ້ນ ໂດຍສະເພາະແມ່ນ ການຈັດກິດຈະກຳສ້າງບັນຍາກາດ ພົບວ່າຄູຍັງປະຕິບັດໄດ້ໜ້ອຍ. ສິ່ງນີ້ບົ່ງບອກວ່າ ຄູອາດຈະຍັງຂາດເຕັກນິກການກະຕຸ້ນຄວາມສົນໃຈຂອງເດັກກ່ອນເຂົ້າສູ່ບົດຮຽນ. ສອດຄ່ອງກັບຜົນວິໄຈຂອງ Phanthachit et al. (2026) ທີ່ຊີ້ໃຫ້ເຫັນວ່າ ຄູປະຖົມໃນຫຼວງພະບາງ ຍັງປະເຊີນກັບສິ່ງທ້າທາຍໃນການນຳໃຊ້ສື່ ແລະ ການຈັດກິດຈະກຳຮຽນ-ການສອນທີ່ຫຼາກຫຼາຍ. ການທີ່ຄູເນັ້ນພຽງແຕ່ການທັກທາຍຕາມຂັ້ນຕອນ ແຕ່ຂ້າມຂັ້ນຕອນການຈັດກິດຈະກຳກະຕຸ້ນເພື່ອສ້າງບັນຍາກາດກ່ອນເຂົ້າສູ່ບົດຮຽນນັ້ນ, ອາດສົ່ງຜົນໃຫ້ຄວາມສົນໃຈ ແລະ ແຮງຈູງໃຈຂອງນັກຮຽນຕໍ່ການຮຽນພາສາອັງກິດຫຼຸດລົງໃນໄລຍະຍາວ. ນອກຈາກນັ້ນ, ປະເດັນທີ່ເປັນຂໍ້ບົກຜ່ອງ ແລະ ຈຳເປັນຕ້ອງໄດ້ຮັບການປັບປຸງຢ່າງຮີບດ່ວນແມ່ນ ດ້ານການສະຫຼຸບບົດຮຽນ ແລະ ການມອບວຽກບ້ານ ເຊິ່ງຜົນການຄົ້ນຄວ້າຊີ້ໃຫ້ເຫັນວ່າຢູ່ໃນລະດັບ "ປັບປຸງ". ສະພາບການດັ່ງກ່າວສະທ້ອນວ່າ ຄູສ່ວນໃຫຍ່ມຸ່ງເນັ້ນພຽງແຕ່ການສອນໃຫ້ຈົບຕາມເນື້ອໃນ ແຕ່ຍັງຂາດການທວນຄືນເພື່ອຢັ້ງຢືນລະດັບຄວາມເຂົ້າໃຈຂອງນັກຮຽນ. ບັນຫານີ້ອາດເກີດຈາກຂໍ້ຈຳກັດດ້ານເຕັກນິກການສິດສອນ ແລະ ຄວາມສາມາດດ້ານທັກສະພາສາອັງກິດຂອງຄູເອງ ດັ່ງທີ່ ກະຊວງສຶກສາທິການ ແລະ ກິລາ (2020 ຂ) ໄດ້ຕັ້ງຂໍ້ສັງເກດໄວ້ວ່າ ການຂາດການສະຫຼຸບບົດຮຽນທີ່ມີປະສິດທິພາບ ຈະສົ່ງຜົນໃຫ້ນັກຮຽນບໍ່ສາມາດຈື່ຈຳ ແລະ ເຂົ້າໃຈໂຄງສ້າງທາງພາສາທີ່ຮຽນມາໄດ້ຢ່າງຊັດເຈນ. ຈາກສະພາບການທີ່ຄູສອນມີທັດສະນະຄະຕິທີ່ດີ (ມີຄວາມຕັ້ງໃຈ) ແຕ່ຍັງຂາດທັກສະດ້ານວິທີການ (ໂດຍສະເພາະເຕັກນິກການສ້າງບັນຍາກາດ ແລະ ການສະຫຼຸບບົດຮຽນ), ມັນຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ນຳໃຊ້ ລະບົບການຝຶກສອນ ແລະ ການຊີ້ແນະ ເຂົ້າຊ່ວຍ ເພື່ອພັດທະນາສັກກະຍະພາບຂອງຄູສອນໃຫ້ສາມາດປ່ຽນຄວາມຕັ້ງໃຈນັ້ນ ໃຫ້ກາຍເປັນການປະຕິບັດການສອນຕົວຈິງໃນຫ້ອງຮຽນທີ່ມີປະສິດທິພາບ. ອີງຕາມ Darling-Hammond et al. (2017), ການພັດທະນາຄູຈະໄດ້ຜົນດີທີ່ສຸດເມື່ອມີການຊີ້ແນະຢູ່ໜ້າວຽກຕົວຈິງ. ດັ່ງນັ້ນ, ກິດຈະກຳສະໜັບສະໜູນຄູຂອງ ມູນນິທິສົ່ງແຫ່ງຄວາມຫວັງ ຄວນມຸ່ງເນັ້ນການຝຶກສອນເຕັກນິກການສະຫຼຸບບົດຮຽນແບບງ່າຍໆ ແລະ ການອອກແບບວຽກບ້ານທີ່ສ້າງສັນ ເພື່ອແກ້ໄຂບັນຫາໃນຊ່ອງຫວ່າງທີ່ຜົນວິໄຈນີ້ໄດ້ຄົ້ນພົບ.

## 5. ສະຫຼຸບ

ຈາກການສຶກສາສະພາບການສອນພາສາອັງກິດຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5 ຢູ່ແຂວງຫຼວງພະບາງ ໂດຍຜ່ານການສັງເກດການສອນຕົວຈິງໃນ 4 ດ້ານຫຼັກ, ສາມາດສະຫຼຸບຜົນການຄົ້ນຄວ້າໄດ້ດັ່ງນີ້:

1. ສະພາບການສອນໃນພາບລວມຜົນການຄົ້ນຄວ້າ ພົບວ່າ ສະພາບການສອນພາສາອັງກິດຂອງຄູໃນໂຮງຮຽນເປົ້າໝາຍ ໂດຍລວມແມ່ນຢູ່ໃນລະດັບ ປານກາງ ($\bar{X}$ = 2.45, S.D. = 0.44). ສິ່ງນີ້ສະທ້ອນໃຫ້ເຫັນວ່າ ຄູສອນສ່ວນໃຫຍ່ມີພື້ນຖານການຈັດການຮຽນ-ການສອນທີ່ດີໃນລະດັບໜຶ່ງ ແຕ່ຍັງມີບາງຂັ້ນຕອນທີ່ຈຳເປັນຕ້ອງໄດ້ຮັບການພັດທະນາ ແລະ ປັບປຸງຢ່າງຕໍ່ເນື່ອງ ເພື່ອໃຫ້ສອດຄ່ອງກັບມາດຕະຖານການສອນພາສາອັງກິດໃນລະດັບປະຖົມ.

2. ດ້ານທີ່ປະຕິບັດໄດ້ດີ:ດ້ານທີ່ຄູສາມາດປະຕິບັດໄດ້ດີທີ່ສຸດ ແລະ ຢູ່ໃນລະດັບ ດີ ແມ່ນ ດ້ານການເຄົາລົບກັນໃນສະພາບແວດລ້ອມການຮຽນ-ການສອນ ($\bar{X}$ = 3.04) ຮອງລົງມາແມ່ນ ດ້ານວິທີການຈັດການຫ້ອງຮຽນ ($\bar{X}$ = 2.77). ຜົນນີ້ບົ່ງບອກວ່າ ຄູມີຄວາມສາມາດໂດດເດັ່ນໃນການສ້າງສາຍສຳພັນທີ່ດີກັບນັກຮຽນ, ມີການສື່ສານທີ່ເໝາະສົມ ແລະ ສາມາດບໍລິຫານຈັດການເວລາໃນຫ້ອງຮຽນໄດ້ຢ່າງມີປະສິດທິພາບ.

3. ດ້ານທີ່ຄວນປັບປຸງ:ດ້ານທີ່ຄູຍັງເຮັດບໍ່ທັນໄດ້ດີ ແລະ ຕ້ອງໄດ້ຮັບການປັບປຸງຮີບດ່ວນແມ່ນ ດ້ານການສະຫຼຸບບົດຮຽນ ($\bar{X}$ = 1.70) ເຊິ່ງຕົກຢູ່ໃນລະດັບ ປັບປຸງ. ນອກຈາກນີ້, ໃນຂັ້ນການເລີ່ມຕົ້ນບົດຮຽນ ກໍພົບວ່າການຈັດກິດຈະກຳສ້າງບັນຍາກາດ ຍັງປະຕິບັດໄດ້ໜ້ອຍ. ສິ່ງເຫຼົ່ານີ້ເປັນຕົວຊີ້ວັດວ່າ ຄູຍັງຂາດເຕັກນິກການສະຫຼຸບເນື້ອໃນສຳຄັນ ແລະ ການມອບວຽກບ້ານທີ່ຊັດເຈນ ເຊິ່ງອາດສົ່ງຜົນກະທົບຕໍ່ຄວາມຍືນຍົງຂອງຄວາມຮູ້ທີ່ນັກຮຽນໄດ້ຮັບ.

ຂໍ້ສະຫຼຸບທາງວິຊາການໂດຍລວມ ຜົນການຄົ້ນຄວ້າຄັ້ງນີ້ຢັ້ງຢືນວ່າ ຄູສອນພາສາອັງກິດໃນຊັ້ນປະຖົມສຶກສາ ມີພື້ນຖານ 'ໃນທາງພຶດຕິກຳ, ການທີ່ຄູສະແດງອອກ' ຕໍ່ການຈັດການຮຽນ-ການສອນຢ່າງຊັດເຈນ, ເຊິ່ງສະແດງອອກໂດຍຜ່ານການສ້າງສາຍສຳພັນທີ່ດີ ແລະ ການໃຫ້ຄວາມເຄົາລົບຕໍ່ນັກຮຽນໃນຫ້ອງຮຽນ. ເຖິງຢ່າງໃດກໍຕາມ, ສິ່ງທີ່ຍັງເປັນສິ່ງທ້າທາຍຫຼັກແມ່ນ 'ທັກສະດ້ານເຕັກນິກວິທີການສອນສະເພາະ' ທີ່ຍັງບໍ່ທັນຫຼາກຫຼາຍ. ດັ່ງນັ້ນ, ຍຸດທະສາດການສະໜັບສະໜູນຄູຜ່ານ 'ລະບົບການຝຶກສອນ' ທີ່ມຸ່ງເນັ້ນເພື່ອແກ້ໄຂບັນຫາໃນຂັ້ນຕອນການເລີ່ມຕົ້ນບົດຮຽນ ແລະ ການສະຫຼຸບບົດຮຽນ ຈຶ່ງເປັນກຸນແຈສຳຄັນໃນການຍົກລະດັບສະມັດຕະພາບຂອງຄູ ແລະ ສ້າງຄວາມຍືນຍົງໃຫ້ແກ່ການສຶກສາພາສາອັງກິດໃນແຂວງຫຼວງພະບາງຢ່າງແທ້ຈິງ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ, ກົມສາມັນສຶກສາ. (2007). *ຄູ່ມືເຝິກອົບຮົມສ້າງຄູ ສຶກສານິເທດ: ໂຄງການພັດທະນາຄູ ແລະ ຍົກຖານະຄູ*. ກະຊວງສຶກສາທິການ.

ກະຊວງສຶກສາທິການ ແລະ ກິລາ. (2020 ກ). *ຄູ່ມືການຈັດຕັ້ງປະຕິບັດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ສຳລັບຄູສອນ ແລະ ຜູ້ບໍລິຫານການສຶກສາ.* ວຽງຈັນ: ກົມສ້າງຄູ.

ກະຊວງສຶກສາທິການ ແລະ ກິລາ. (2020 ຂ). *ແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີIX(2021-2025).* ນະຄອນຫຼວງວຽງຈັນ: ໂຮງພິມສຶກສານະຄອນຫຼວງວຽງຈັນ.

ຄຳຜ່ານ ພົມມະນີຈັນ, ຄຳພັດ ໄຊຍະສິນຄຳ, ແອັດ ວົງພະຈັນ, ຄອນສະຫວັນ ກຸມລະບຸດ, ເພັດມະນີ ສີລັດມີນາ, & ສຸວັນນະເພັດ ມັດນີວົງ. (2023). *ຄູ່ມືເຝິກອົບຮົມຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ໂມດູນ1(ສຳລັບຄູເຝິກ).*

ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ. (2023). ບົດລາຍງານ ໂຄງການສໍແຫ່ງຄວາມຫວັງຊ່ວຍເຫຼືອ

ການສຶກສາ ຢູ່ ສປປ ລາວ,ໄລຍະIII. (ເອກະສານພາຍໃນ). ແຂວງຫຼວງພະບາງ.

ອົງການສໍແຫ່ງຄວາມຫວັງ. (20.9.2024). *ບົດບັນທຶກຄວາມເຂົ້າໃຈລະຫ່ວາງ ກະຊວງສຶກສາທິການ ແລະ ກິລາ ຕ່າງໜ້າໂດຍ: ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ ແລະ ມູນນິທິສໍແຫ່ງຄວາມຫວັງ ປະຈຳ ສປປ ລາວ ໂຄງການສໍແຫ່ງຄວາມຫວັງ ຊ່ວຍເຫຼືອການສຶກສາ ຢູ່ ສປປ ລາວ, ໄລຍະ III (20.9.2024).*

Chomeya, R. (2010). Quality of Likert's scale: Rating scale versus ofied Likert's scale. *Journal of Social Sciences, 6*(3), 397-401. https://doi.org/10.3844/jssp.2010.397.401

Darling-Hammond-Hammond, L., Hyler, M. E., & Gardner, M.(2017). *Effective Teacher Professional Development. Palo Alto.* CA: Learning Policy Institute.

Hongsaxard, N. (2010). *The development of an English language teaching training model for primary school teachers focusing on modern thinking* [Master's thesis, Mahasarakham University]. Thai Library Integrated System.

Knight, J. (2022). *The Definitive Guide to Instructional Coaching: Seven Factors for Success.* ASCD. https://files.ascd.org/pdfs/publications/books/The-Definitive-Guide-to-Instructional-Coaching-sample-chapters.pdf

Kounphilavong, S. (2020). Challenges in teaching English at primary schools in Lao PDR: A case study of Vientiane Capital. *Journal of Education and Development, 4*(1), 12-25.

Phanthachit, S., Vongsouangtham, B., & Makesavanh, S. (2026). A Study of the Teaching and

Learning English in the State Primary Schools in Luang Prabang District, Luang Prabang

Province. *Souphanouvong University Journal, 12*(1), 102-115

Shin, J., & Crandall, J. (2021). *Teaching Young Learners English: From Theory to Practice (2nd ed.).* National Geographic Learning.

Sitthixay, B. (2021). The effectiveness of teacher training and post-training support in Lao primary education. *Lao Journal of Academic Studies, 7*(2), 88-103.

Vongxay, H. (2024). Professional Learning Communities (PLC) as a model for instructional supervision in rural Laos. *Journal of Professional Development in Education, 50*(1), 112-128.

ຕາຕະລາງທີ 1 ຜົນການວິເຄາະຂໍ້ມູນ ຂັ້ນການເລີ່ມຕົ້ນ

| ລ/ດ | ເນື້ອໃນການປະເມີນ | $\overline{X}$ | S.D. | ແປຄວາມໝາຍ |
|---|---|---|---|---|
| 1 | ການທັກທາຍ | 2.80 | 0.81 | ດີ |
| 2 | ການອອກກຳລັງ ກາຍ ຫຼື ກິດຈະກຳ ສ້າງບັນຍາກາດ | 1.78 | 1.15 | ປານກາງ |
| 3 | ການທວນຄືນບົດຮຽນເກົ່າ | 2.05 | 0.94 | ປານກາງ |
| 4 | ການສອນບົດ ຮຽນໃໝ່ | 2.61 | 0.77 | ດີ |
| | ສະເລ່ຍລວມ | 2.31 | 0.59 | ປານກາງ |

ຕາຕະລາງທີ 2 ຜົນການວິເຄາະຂໍ້ມູນ ການເຄົາລົບກັນໃນສະພາບແວດລ້ອມການຮຽນການສອນໃນຫ້ອງຮຽນ

| ລ/ດ | ເນື້ອໃນການປະເມີນ | $\bar{X}$ | S.D. | ແປຄວາມໝາຍ |
|---|---|---|---|---|
| 1 | ການມີສ່ວນຮ່ວມ ຂອງນັກຮຽນ | 3.07 | 0.56 | ດີ |
| 2 | ການສື່ສານຂອງ ຄູຕໍ່ກັບນັກຮຽນໃນຫ້ອງຮຽນ | 3.24 | 0.53 | ດີ |
| 3 | ການແກ້ໄຂຂໍ້ຂັດ ແຍ້ງ | 3.27 | 0.80 | ດີ |
| 4 | ການກະຕຸ້ນ ແລະ ໃຫ້ກຳລັງໃຈ | 2.71 | 0.68 | ດີ |
| 5 | ຄວາມເຄົາລົບຂອງຄູຕໍ່ນັກຮຽນ | 2.93 | 0.64 | ດີ |
| | ສະເລ່ຍລວມ | 3.04 | 0.41 | ດີ |

ຕາຕະລາງທີ 3 ຜົນການວິເຄາະຂໍ້ມູນ ວິທີການຈັດການຫ້ອງຮຽນ

| ລ/ດ | ເນື້ອໃນການປະເມີນ | $\bar{X}$ | S.D. | ແປຄວາມໝາຍ |
|---|---|---|---|---|
| 1 | ການອະທິບາຍ | 2.80 | 0.51 | ດີ |
| 2 | ການບໍລິຫານ ເວລາ | 3.02 | 0.65 | ດີ |
| 3 | ການເຊື່ອມຕໍ່ລະ ຫວ່າງຫົວຂໍ້ຂອງບົດ ຮຽນ | 2.59 | 0.63 | ດີ |
| 4 | ການນຳໃຊ້ກິດຈະກຳເຂົ້າໃນການສອນ | 2.68 | 0.65 | ດີ |
| | ສະເລ່ຍລວມ | 2.77 | 0.48 | ດີ |

ຕາຕະລາງທີ 4 ຜົນການວິເຄາະຂໍ້ມູນ ການສະຫຼຸບບົດຮຽນ.

| ລ/ດ | ເນື້ອໃນການປະເມີນ | $\bar{X}$ | S.D. | ແປຄວາມໝາຍ |
|---|---|---|---|---|
| 1 | ການສະຫຼຸບບົດຮຽນ | 1.88 | 1.07 | ປານກາງ |
| 2 | ການມອບວຽກ ບ້ານ | 1.54 | 0.84 | ປັບປຸງ |
| | ສະເລ່ຍລວມ | 1.70 | 0.87 | ປັບປຸງ |

ຕາຕະລາງທີ 5 ຜົນການສັງລວມສະພາບການສອນພາສາອັງກິດຂອງຄູໃນຊັ້ນປະຖົມສຶກສາ ຂັ້ນ ປໍ3-ປໍ5

| ລ/ດ | ເນື້ອໃນການປະເມີນ | $\bar{X}$ | S.D. | ແປຄວາມໝາຍ |
|---|---|---|---|---|
| 1 | ການເລີ່ມຕົ້ນ | 2.31 | 0.59 | ປານກາງ |
| 2 | ການເຄົາລົບກັນໃນສະພາບແວດລ້ອມການຮຽນການສອນໃນຫ້ອງຮຽນ | 3.04 | 0.41 | ດີ |
| 3 | ວິທີການຈັດການຫ້ອງຮຽນ | 2.77 | 0.48 | ດີ |
| 4 | ການສະຫຼຸບບົດຮຽນ | 1.70 | 0.87 | ປັບປຸງ |
| | ສະເລ່ຍລວມ | 2.45 | 0.44 | ປານກາງ |